ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ເອກະສານຊ້ອນທ້າຍຂອງແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ 2021-2025:

## ຄວາມຕ້ອງການດ້ານການເງິນເພື່ອຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ

ສຶກສາ - ກິລາ

ສະຫະພາບ ເອີຣົບ
European Union

unicef
ເພື່ອເດັກທຸກໆຄົນ

# ບົດລາຍງານ

ບົດລາຍງານການຂື້ນງົບປະມານສະບັບນີ້, ຫົວຂໍ້ຄວາມຕ້ອງການດ້ານງົບປະມານໃນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດໂພຊະນາການ ປີ 2021–2025 ໄດ້ຮັບການສະໜັບສະໜູນຈາກສະຫະພາບເອີຣົບ ແລະ ອົງການຢູນິເຊັບ ພາຍໃຕ້ໂຄງການ ການອຳນວຍຄວາມສະດວກໃນການຄຸ້ມຄອງບໍລິຫານການຂອງລັດ. ຈຸດປະສົງເພື່ອສະໜັບສະໜູນການຮ່ວມມືຂອງຫຼາຍຝ່າຍໃນວຽກງານໂພຊະນາການຢູ່ລາວ (ມີກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ) ເພື່ອຈັດສັນບູລິມະສິດໃນການປະຕິບັດນະໂຍບາຍ ທີ່ເນັ້ນໃສ່ການສ້າງຄວາມສະເໝີພາບເທົ່າທຽມກັນ, ກິດຈະການທີ່ລົງທຶນໜ້ອຍແຕ່ໄດ້ໝາກຜົນສູງ. ບໍລິສັດ Oxford Policy Management (OPM) ພ້ອມດ້ວຍອົງການຢູນິເຊັບ ແລະ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ໄດ້ປະກອບສ່ວນດ້ານວິຊາການເຂົ້າໃນການຂື້ນງົບປະມານ. ບົດລາຍງານສະບັບນີ້ ໄດ້ສະແດງທັດສະນະຂອງຊ່ຽວຊານຜູ້ຂຽນ ແລະ ບໍ່ໄດ້ໝາຍເຖິງທັດສະນະຂອງອົງການຢູນິເຊັບ ແລະ ສະຫະພາບເອີຣົບແຕ່ຢ່າງໃດ.

# ຂໍ້ມູນກ່ຽວກັບບໍລິສັດຄຸ້ມຄອງບໍລິຫານນະໂຍບາຍແຫ່ງອັອກຊ໌ຟອດ (OPM)

ບໍລິສັດຄຸ້ມຄອງບໍລິຫານນະໂຍບາຍແຫ່ງອັອກຊ໌ຟອດ (OPM) ມີຄວາມມຸ້ງໝັ້ນເພື່ອຊ່ວຍເຫຼືອປະເທດທີ່ມີລາຍໄດ້ຮັບຕ່ຳ ແລະ ປະເທດທີ່ມີລາຍຮັບປານກາງ ເພື່ອບັນລຸການເຕີບໂຕ, ການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມດ້ອຍໂອກາດຜ່ານການປະຕິວັດນະໂຍບາຍຂອງລັດ.

ພວກເຮົາຈະນຳມາຊຶ່ງການປ່ຽນແປງໄລຍະຍາວທີ່ຍືນຍົງ ດ້ວຍການນຳໃຊ້ຄວາມຊ່ຽວຊານນະໂຍບາຍທີ່ຈັດຕັ້ງປະຕິບັດໄດ້ ແລະ ການວິເຄາະວິໃຈ. ໂດຍຜ່ານຫ້ອງການທີ່ປະຈຳການຢູ່ທົ່ວໂລກ ພວກເຮົາຮ່ວມມືກັບຜູ້ຕັດສິນໃຈລະດັບຊາດເພື່ອເຮັດການສຳຫຼວດ, ການອອກແບບ, ການຈັດຕັ້ງປະຕິບັດ, ການປະເມີນຜົນນະໂຍບາຍຂອງລັດ. ພວກເຮົາເຮັດວຽກໃນທຸກຂະແໜງການຂອງນະໂຍບາຍເສດຖະກິດ, ສັງຄົມ, ການຄຸ້ມຄອງລັດ ລວມມີວຽກງານສາທາລະນະສຸກ, ການເງິນ, ການສຶກສາ, ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງບໍລິຫານລັດ. ພວກເຮົານຳໃຊ້ຊ່ຽວຊານທີ່ປະຈຳຢູ່ລະດັບປະເທດ ແລະ ສາກົນ ເພື່ອສະໜອງການສະໜັບສະໜູນໂດຍການປະກອບຫຼັກຖານທີ່ດີທີ່ສຸດ. ບົດລາຍງານສະບັບນີ້ ແມ່ນດຳເນີນການໂດຍ: ທ່ານ ນາງ ເຣມາ ເບັດທ໌, ທ່ານ ນາງ ເຄັດເທີລີນ ແຄນເທລໂມ, ທ່ານ ວິຣິຍະສັກ ສີສຸພັນທອງ, ແລະ ທ່ານ ນາງ ດິບຕີ້ ລາຕ້າ.

# ສາລະບານ


**ບົດລາຍງານ** ........ ii

**ຂໍ້ມູນກ່ຽວກັບບໍລິສັດຄຸ້ມຄອງບໍລິຫານນະໂຍບາຍແຫ່ງອັອກຊ໌ຟອດ (OPM)** ........ ii

**ສາລະບານ** ........ iii

**ຄຳຫຍໍ້** ........ iv

**1. ພາກແນະນຳ** ........ 1

1.1 ສະພາບສາທາລະນະສຸກ ແລະ ໂພຊະນາການໃນລາວ ........ 1

1.2 ການສະໜອງທຶນໃນວຽກງານສາທາລະນະສຸກ ແລະ ໂພຊະນາການໃນລາວ ........ 1

1.3 ກອບນະໂຍບາຍ ແລະ ຍຸດທະສາດ ດ້ານໂພຊະນາການ ........ 2

1.4 ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN) 2021 – 2025 ........ 3

1.5 ຈຸດປະສົງຂອງຄິດໄລ່ຕົ້ນທຶນສຳລັບແຜນ NPAN II ........ 4

1.6 ໂຄງສ້າງຂອງບົດລາຍງານສະບັບນີ້ ........ 4

**2. ວິທີການ** ........ 5

2.1 ຂະບວນການຈັດລຽງບູລິມະສິດສຳລັບແຜນ NPAN 2021-2025 ........ 5

2.2 ວິທີການຄິດໄລ່ຕົ້ນທຶນ ........ 6

2.2.1 ຂອບເຂດວຽກງານການຄິດໄລ່ຕົ້ນທຶນ ........ 7

2.2.2 ເຄື່ອງມືຄິດໄລ່ຕົ້ນທຶນທີ່ດັດປັບສຳລັບແຜນ NPAN ........ 8

2.2.3 ຂໍ້ມູນ ແລະ ສິ່ງທີ່ໃຊ້ໃນການຄິດໄລ່ຕົ້ນທຶນ ........ 9

**3. ຜົນໄດ້ຮັບ** ........ 10

3.1 ຕົ້ນທຶນທີ່ເປັນຈຳນວນລວມ ........ 10

3.2 ຕົ້ນທຶນແຍກຕາມບູລິມະສິດ ........ 11

**4. ສະຫຼຸບລວມ** ........ 15

**5. ເອກະສານອ້າງອີງ** ........ 16

# ຄໍາຫຍໍ້

| | |
|---|---|
| CMAM | Community-Based Management of Acute Malnutrition |
| DHHP | Department of Hygiene and Health Promotion |
| FANTA | Food and Nutrition Technical Assistance |
| FAO | Food and Agriculture Organization |
| IMAM | Integrated management of acute malnutrition |
| LAK | Laotian Kip |
| Lao PDR | Lao People's Democratic Republic |
| M&E | Monitoring and Evaluation |
| MINIMOD | Micronutrient Intervention Modelling |
| MoH | Ministry of Health |
| NIPN | National Information Platforms for Nutrition |
| NPAN | National Plan of Action for Nutrition |
| OPM | Oxford Policy Management |
| SBCC | Social and Behaviour Change Communication |
| SUN CSA | Scaling Up Nutrition Civil Society Alliance |
| UNICEF | United Nations Children's Fund |
| WASH | Water, Sanitation and Hygiene |
| WBCi | World Breastfeeding Costing Initiative |
| WHO | World Health Organization |


iv

# 1. ພາກແນະນຳ

## 1.1 ສະພາບສາທາລະນະສຸກ ແລະ ໂພຊະນາການໃນລາວ

ໃນປີ 2020 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີປະຊາກອນປະມານ 7,3 ລ້ານຄົນ. ການຂະຫຍາຍຕົວດ້ານເສດຖະກິດຂອງລາວກໍ່ໄດ້ເພີ່ມຂຶ້ນຫຼາຍ ເຊິ່ງມີການເຕີບໂຕຂອງ GDP ໂດຍສະເລ່ຍ 7,7% ໃນທົດສະຫວັດທີ່ຜ່ານມາ. ຄຽງຄູ່ກັບການຂະຫຍາຍຕົວດັ່ງກ່າວ, ກໍຍັງມີຄວາມຄືບໜ້າຢ່າງຈະແຈ້ງກ່ຽວກັບການປັບປຸງຜົນໄດ້ຮັບ ດ້ານການຮັກສາສຸຂະພາບແມ່ ແລະ ເດັກໃນທົດສະວັດທີ່ຜ່ານມາ, ລວມທັງອັດຕາສ່ວນໃນເດັກອາຍຸຕໍ່າກວ່າ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ ກໍຫຼຸດລົງ, 25% ໃນລະຫວ່າງ 2011 ຫາ 2017 (ຂໍ້ມູນຈາກສູນສະຖິຕິແຫ່ງຊາດລາວ, 2018). ແນວໃດກໍ່ຕາມ, 33% ຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ (ເຫັນວ່າອັດຕາສ່ວນດັ່ງກ່າວ ສູງກວ່າຄ່າສະເລ່ຍຂອງພາກພື້ນອາຊີທີ່ຢູ່ໃນລະດັບ 21.8% ), ແລະ 19% ຂອງເດັກນ້ອຍມີນ້ຳໜັກຕໍ່າກວ່າມາດຕະຖານ (NiPN, 2022). ສະພາບການຂາດສານອາຫານແບບລວງສູງບໍ່ໄດ້ມາດຕະຖານໃນເດັກນ້ອຍອາຍຸຕໍ່າກວ່າ 5 ປີ ມີຄວາມແຕກຕ່າງກັນຫຼາຍຢູ່ແຕ່ລະພາກຂອງ ສປປ ລາວ, ເຊິ່ງມີ 3,6% ຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ຂາດສານອາຫານຊຳເຮື້ອຢູ່ນະຄອນຫລວງວຽງຈັນ, ສ່ວນຢູ່ຜົ້ງສາລີພັດມີສູງຮອດ 54% . ການຂາດສານອາຫານແບບລວງສູງບໍ່ໄດ້ມາດຕະຖານຢູ່ເຂດຊົນນະບົດ ແລະ ຕົວເມືອງ ກໍ່ມີຄວາມແຕກໂຕນກັນຫຼາຍ. ເຊັ່ນດຽວກັນ, ບັນຫາການຂາດສານອາຫານຂອງແມ່ ຍັງຢູ່ໃນລະດັບສູງ, ຊຶ່ງຄາດຄະເນເຫັນວ່າ 40% ຂອງແມ່ຍິງໄວຈະເລີນພັນເປັນໂລກເລືອດຈາງ.

ມີບາງສາເຫດເຊື່ອງຊ້ອນທີ່ພາໃຫ້ເກີດການຂາດສານອາຫານໃນລາວ ປະກອບມີ: ການເຂົ້າເຖິງອາຫານທີ່ມີຄວາມຈຳກັດ, ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານໃນຄົວເຮືອນ, ແລະ ອາຫານທີ່ມີທາດໂພຊະນາການດີແຕ່ມີລາຄາສູງ - ເຊິ່ງສະພາບການດັ່ງກ່າວ ຍິ່ງຮ້າຍແຮງຫຼາຍຂຶ້ນຍ້ອນມີຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຍິ່ງເປັນບັນຫາທ້າທາຍຕໍ່ການແກ້ໄຂບັນຫາການຂາດສານອາຫານໃຫ້ສຳເລັດຜົນ. ຕົວຢ່າງ: ມາຮອດເດືອນຕຸລາ 2022, ຫນຶ່ງໃນເຈັດ ຫຼື 14% ຂອງຄົວເຮືອນ, ປະສົບກັບບັນຫາຄວາມບໍ່ໝັ້ນຄົງດ້ານສະບຽງອາຫານໃນລະດັບໃດໜຶ່ງ, ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານແຕກຕ່າງກັນຢູ່ໃນແຕ່ລະແຂວງ, ຈາກລະດັບສູງສຸດຢູ່ທີ່ 37% ຮອດລະດັບຕໍ່າສຸດຢູ່ທີ່ 3% , ໃນຂະນະທີ່ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານໃນເຂດຊົນນະບົດ ແມ່ນສູງຫຼາຍກວ່າຂອງເຂດຕົວເມືອງຮອດສອງເທົ່າ (ຂໍ້ມູນຈາກອົງການອາຫານໂລກ & ກະຊວງກະສິກຳ ແລະ ປ່າໄມ້, 2022). ລາຍຮັບຂອງລັດຖະບານທີ່ຫຼຸດລົງຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ລັດຖະບານບໍ່ສາມາດເພີ່ມການໃຊ້ຈ່າຍໃນຂະແໜງສຳຄັນທີ່ເຮັດວຽກງານດ້ານໂພຊະນາການ. ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດການດ້ານການເງິນທີ່ຕາມມາ ຍັງເຮັດໃຫ້ເກີດຄວາມຂັດສົນຕໍ່ການດຳລົງຊີວິດ, ການສະໜອງສະບຽງອາຫານ, ການຮັກສາສຸຂະພາບ, ການປົກປ້ອງສັງຄົມ, ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ, ຊຶ່ງເຮັດໃຫ້ຈຳນວນຜູ້ທີ່ມີຄວາມສ່ຽງທີ່ສຸດ ເຂົ້າເຖິງອາຫານ ແລະ ການບໍລິການດ້ານສຸຂະພາບໄດ້ໜ້ອຍລົງ.

## 1.2 ການສະໜອງທຶນໃນວຽກງານສາທາລະນະສຸກ ແລະ ໂພຊະນາການໃນລາວ

ລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ ໄດ້ລົງທຶນໃສ່ວຽກງານດ້ານໂພຊະນາການເປັນຈຳນວນເງິນປະມານ 141,9 ລ້ານໂດລາສະຫະລັດ ໃນໄລຍະ 4 ປີ (2016–2019) ຜ່ານມາ, ຕົກເປັນປະມານ 34,5% ຂອງງົບປະມານທີ່ຄາດຄະເນໄວ້ສຳລັບການຈັດຕັ້ງແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (2016–2020). ການວິເຄາະງົບປະມານທີ່ໃຊ້ເຂົ້າໃນວຽກໂພຊະນາການໃນລາວໃນລະຫວ່າງປີ 2016 ຫາ 2019 ທີ່ຜ່ານມາ ພົບວ່າ ປະເທດລາວຍັງເພິ່ງພາຜູ້ໃຫ້ທຶນໃນການສະໜອງທຶນສຳລັບ

ວຽກງານດ້ານໂພຊະນາການ ເຊິ່ງການຊ່ວຍເຫຼືອດ້ານການເງິນຈາກພາຍນອກຕົກເປັນປະມານ 90% ຂອງການລົງທຶນດ້ານໂພຊະນາການທັງໝົດ. ນອກຈາກນັ້ນ, ຍັງບໍ່ມີຂໍ້ມູນລະອຽດດ້ານງົບປະມານທີ່ໃຊ້ຈ່າຍເຂົ້າໃນວຽກງານໂພຊະນາການ ຍ້ອນວ່າໂຄງສ້າງງົບປະມານຂອງລັດບໍ່ມີລະຫັດຮ່ວງເງິນທີ່ຈັດສັນສະເພາະສຳລັບວຽກໂພຊະນາການ; ປະເທດລາວ ໃຊ້ວິທີຂຶ້ນແຜນງົບປະມານຕາມກິດຈະກຳ ແທນທີ່ຈະຂຶ້ນຕາມແຜນງານ ແລະ ງົບປະມານ ສຳລັບວຽກໂພຊະນາການແມ່ນລວມຢູ່ໃນຫຼາຍໆຮ່ວງງົບປະມານຂອງຫຼາຍຂະແໜງການ. ສະຫຼຸບວ່າ, ວຽກງານດ້ານໂພຊະນາການທີ່ມີຜົນໄດ້ຮັບສູງ ຍັງບໍ່ມີທຶນພຽງພໍ, ໃນຂະນະທີ່ວຽກງານທີ່ມີຜົນຮັບຕໍ່າ ພັດໄດ້ຮັບການໜອງທຶນຢ່າງຕໍ່ເນື່ອງ (ຂໍ້ມູນຈາກອົງການຢູນິເຊັບ, 2020).

## 1.3 ກອບນະໂຍບາຍ ແລະ ຍຸດທະສາດ ດ້ານໂພຊະນາການ

ຍຸດທະສາດແຫ່ງຊາດດ້ານໂພຊະນາການຮອດປີ 2025[1] ສະໜອງຂອບເຂດການປະຕິບັດວຽກງານດ້ານໂພຊະນາການໃນທົ່ວປະເທດ. ເອກະສານນີ້ ແມ່ນຍຸດທະສາດແຫ່ງຊາດດ້ານໂພຊະນາການ ຊຸດທີ 2, ແລະເປັນຍຸດທະສາດທີ່ປະກອບມີແຜນປະຕິບັດງານແຫ່ງຊາດເປັນຄັ້ງທຳອິດ ນັບແຕ່ ສປປ ລາວ ເຂົ້າຮ່ວມຂະບວນການຂະຫຍາຍວຽກງານດ້ານໂພຊະນາການ (SUN) ໃນປີ 2013. ມີຄະນະກຳມະການໂພຊະນາການແຫ່ງຊາດ ເປັນໃຈກາງປະສານງານການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ, ເຊິ່ງມັນປະກອບມີ 4 ທິດທາງຍຸດທະສາດ ແລະ 11 ເປົ້າໝາຍຍຸດທະສາດ ເພື່ອແກ້ໄຂສາເຫດຕົ້ນຕໍທີ່ພາໃຫ້ເກີດການຂາດໂພຊະນາການ (ການກິນອາຫານ ແລະ ການປ້ອງກັນພະຍາດ); ບັນຫາບໍ່ມຊ້ອນ (ຄວາມໝັ້ນຄົງດ້ານສະບຽງອາຫານ, ການເຂົ້າເຖິງ ແລະ ຊົມໃຊ້ນໍ້າສະອາດ/ສຸຂາພິບານ ແລະ ການບໍລິການສາທາລະນະສຸກ); ແລະ ບັນຫາພື້ນຖານ (ການປະສານງານ, ຄວາມສາມາດ, ການມີ ແລະ ນຳໃຊ້ຂໍ້ມູນ, ການລົງທຶນ). ຍຸດທະສາດດັ່ງກ່າວ ປະກອບດ້ວຍແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN) ສົກປີ 2016–2020 ເຊິ່ງເປັນແຜນດຳເນີນງານທີ່ມີການຄິດໄລ່ຕົ້ນທຶນເພື່ອຈັດຕັ້ງປະຕິບັດຮ່ວມກັນຫຼາຍຂະແໜງການ. ທີມງານຈາກ SUN ໄດ້ດຳເນີນການທົບທວນການຈັດຕັ້ງປະຕິບັດໃນປີ 2018 ແລະ ພົບວ່າແຜນການດັ່ງກ່າວມີໂຄງປະກອບທີ່ດີ ແລະ ວຽກງານທີ່ປະຕິບັດກໍແທດເໝາະກັບສະພາບການ ແລະ ຄວາມສາມາດທີ່ປະເທດລາວມີໃນປະຈຸບັນ; ເຊິ່ງແຜນການດັ່ງກ່າວໄດ້ນຳໃຊ້ວິທີການປະຕິບັດວຽກງານໂພຊະນາການທີ່ໄດ້ຈາກບົດຮຽນຕົວຈິງ ທີ່ສອດຄ່ອງກັບຄຳແນະນຳທົ່ວໂລກ (MQSUN+, 2018).

ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບອົງການຢູນິເຊັບ ໄດ້ແຍກມາເຮັດການທົບທວນກ່ຽວກັບຄ່າໃຊ້ຈ່າຍຂອງ NPAN 2016–2020 ໂດຍນຳໃຊ້ທຶນຈາກສະຫະພາບເອີຣົບ, ເພື່ອປະເມີນວ່າຄວາມຕ້ອງການດ້ານການເງິນທີ່ຄິດໄລ່ໄວ້ນັ້ນ ໄດ້ຮັບການສະໜອງຕາມແຜນຫຼືບໍ່ ແລະ ເພື່ອໃຫ້ຄຳແນະນຳໃນການສ້າງແຜນ NPAN ຊຸດຕໍ່ໄປ (2021–2025). ການທົບທວນຄັ້ງນີ້ພົບວ່າ ນອກຈາກແຜນປະຕິບັດວຽກງານດ້ານໂພຊະນາການຂອງກະຊວງສາທາລະນະສຸກແລ້ວ, ບັນດາກະຊວງອື່ນໆທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານໂພຊະນາການ ເຊັ່ນ: ການສຶກສາ, ກະສິກຳ ແລະ ປ່າໄມ້ ພັດປະຕິບັດແຕ່ແຜນງານຂອງຂະແໜງການຕົນເອງ, ເຊິ່ງຍັງບໍ່ທັນສອດຄ່ອງກັບແຜນ NPAN ໄດ້ຢ່າງສົມບູນ. ນອກຈາກນັ້ນ, ຍັງເຫັນວ່າມີຄວາມຈຳເປັນຈະຕ້ອງປັບປຸງການວາງແຜນ ແລະ ການຂຶ້ນງົບປະມານສຳລັບວຽກງານໂພຊະນາການຂອງແຕ່ລະຂະແໜງການ ແລະ ວຽກງານທີ່ເຮັດຮ່ວມການຫຼາຍຂະແໜງການ ໃຫ້ສອດຄ່ອງກັບການວຽກງານດ້ານໂພຊະນາການທີ່ກຳນົດໄວ້ໃນຍຸດທະສາດ ແລະ NPAN. ເຖິງແມ່ນວ່າຈະມີຄວາມຄືບໜ້າໃນການປັບປຸງສາລະບານບັນຊີ, ແຕ່ຍັງເຫັນວ່າບໍ່ມີການຈັດປະເພດຮ່ວງເງິນສຳລັບວຽກງານໂພຊະນາການໂດຍສະເພາະ ຈຶ່ງເຮັດໃຫ້ບໍ່ສາມາດຈັດສັນງົບປະມານໃຫ້ແກ່ໜ່ວຍງານທີ່ຮັບຜິດຊອບວຽກໂພຊະນາການ.ງົບປະມານສຳລັບວຽກງານໂພຊະນາການແມ່ນຍັງນອນຢູ່ໃນຮ່ວງງົບປະມານລວມຂອງຂະແໜງການ. ການສະໜອງທຶນຂອງລັດຖະບານໃສ່ວຽກງານໂພຊະນາການໃນທົ່ວປະເທດມີປະມານ 10% ຂອງມູນຄ່າການລົງທຶນທັງໝົດ, ໝາຍຄວາມວ່າມີການເພິ່ງພາອາໄສທຶນຈາກຄູ່ຮ່ວມພັດທະນາເປັນຈຳນວນຫຼວງຫຼາຍ, ຊຶ່ງຫເຮັດໃຫ້ເກີດຄວາມກັງວົນກ່ຽວກັບຄວາມຍືນຍົງໃນດ້ານການສະໜອງທຶນໃສ່ວຽກໂພຊະນາການໃນໄລຍະຍາວ (MPI ແລະ UNICEF, 2020).

---

1 ລັດຖະບານແຫ່ງ ສປປ ລາວ (2015). ຍຸດທະສາດແຫ່ງຊາດດ້ານໂພຊະນາການຮອດປີ 2025 ແລະ ແຜນປະຕິບັດງານ 2016–2020 . ລັດຖະບານແຫ່ງ ສປປ ລາວ: ນະຄອນຫຼວງວຽງຈັນ.

ການທົບທວນແຜນ NPAN 2016–2020 ຍັງຊີ້ໃຫ້ເຫັນວ່າ ແຜນດັ່ງກ່າວບໍ່ໄດ້ແຍກວ່າການຈັດຕັ້ງລັດຂັ້ນໃດ (ສູນກາງ ຫຼື ແຂວງ) ຮັບຜິດຊອບຄ່າໃຊ້ຈ່າຍກິດຈະກຳໃດ. ບໍ່ມີການລະບຸວ່າໃຜເປັນຜູ້ສະໜອງທຶນ ແລະ ເປັນຈຳນວນເທົ່າໃດ. ຍິ່ງໄປກວ່ານັ້ນ, ກໍ່ບໍ່ມີຄວາມຈະແຈ້ງວ່າກິດຈະກຳໃດໃຊ້ເງິນຮ່ວງບໍລິຫານປົກກະຕິ ແລະ ກິດຈະກຳໃຊ້ເງິນຮ່ວງລົງທຶນ. ການທົບທວນນີ້ໄດ້ຮຽກຮ້ອງໃຫ້ມີການຈັດລຽງບູລິມະສິດກຸ່ມກິດຈະກຳທີ່ສ້າງປະສິດທິພາບ,ໂດຍສຸມໃສ່ການລົງທຶນທີ່ມີຜົນຮັບດ້ານໂພຊະນາການສູງ, ໃຫ້ຄວາມສຳຄັນຕໍ່ການມີສ່ວນຮ່ວມຂອງກະຊວງການເງິນ ເພື່ອໃຫ້ຂື້ນງົບປະມານສຳລັບວຽກໂພຊະນາການທີ່ແທດເໝາະກັບຄວາມຕ້ອງການຕົວຈິງ ແລະ ລວມຢູ່ໃນແຜນງົບປະມານຂອງຂະແໜງການອີກດ້ວຍ. ເພື່ອໃຫ້ເຮັດໄດ້ຕາມຄຳສັ່ນຍານີ້, ສະຫະພາບເອີຣົບ ແລະ ອົງການຢູນິເຊັບໄດ້ຮັບມອບໝາຍໃຫ້ຄິດໄລ່ທຶນທັງໝົດທີ່ຕ້ອງໃຊ້ເຂົ້າໃນການປະຕິບັດແຜນ NPAN 2021–2025.

## 1.4 ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN) 2021 – 2025

ຈຸດປະສົງຂອງແຜນ NPAN 2021–2025 ແມ່ນເພື່ອຊີ້ທິດເຍືອງທາງໃຫ້ແກ່ການແກ້ໄຂບັນຫາແຫ່ງຊາດກ່ຽວກັບການຂາດໂພຊະນາການ. ແຜນ NPAN ສຳລັບປີ 2021–2025 ໄດ້ຮັບການປັບປຸງໂດຍອີງໃສ່ຜົນການທົບທວນກາງສະໄໝຂອງການປະຕິບັດແຜນ NPAN 2016–2020, ທີ່ໄດ້ດຳເນີນໃນປີ 2018 ເຊິ່ງໃຊ້ເວລາດົນເຖິງສອງປີ ໃນການເກັບກຳຂໍ້ມູນຫລ້າສຸດ ແລະ ຫຼັກຖານ, ພ້ອມທັງດຳເນີນຂະບວນການປຶກສາຫາລືກັບຫຼາຍຂະແໜງການທີ່ມີສ່ວນຮ່ວມໃນການປະຕິບັດດັ່ງກ່າວ. ການພັດທະນາ NPAN 2021–2025 ແມ່ນຢູ່ພາຍໃຕ້ການນຳພາຂອງຄະນະກຳມະການແຫ່ງຊາດດ້ານໂພຊະນາການ ແລະ ກະຊວງສາທາລະນະສຸກ, ກົມອານາໄມ ແລະ ສົ່ງເສີມສຸຂະພາບ (DHHP) ແລະ ສູນໂພຊະນາການ. ທີມງານດັ່ງກ່າວໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຫະພັນແມ່ຍິງລາວ, ອົງການຈັດຕັ້ງລັດອື່ນໆ, ພັນທະມິດອົງການຈັດທາງສັງຄົມເພື່ອຂະຫຍາຍວຽກງານໂພຊະນາການ (SUN CSA) ທີ່ມີສະມາຊິກເປັນອົງການຈັດຕັ້ງທາງສັງຄົມຂອງລາວ ແລະ ສາກົນ, ຄູ່ຮ່ວມພັດທະນາສອງຝ່າຍ ແລະ ຫຼາຍຝ່າຍ, ພ້ອມທັງມີການຊ່ວຍເຫຼືອດ້ານວິຊາການຈາກອົງການຢູນິເຊັບ ແລະ ທຶນຊ່ວຍເຫຼືອຈາກສະຫະພາບເອີຣົບ.

ແຜນ NPAN ແມ່ນການ ຜັນຂະຫຍາຍຍຸດທະສາດແຫ່ງຊາດດ້ານໂພຊະນາການ ແນໃສ່ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຫຼຸດຜ່ອນການຂາດສານອາຫານທຸກຮູບແບບ ແລະ ສຸມໃສ່ການປະຕິບັດງານ ແລະ ການສະໜອງທຶນເຂົ້າໃນວຽກງານທີ່ເປັນບູລິມະສິດຂອງແຜນງານໂພຊະນາການ. ພ້ອມທັງຊຸກຍູ້ການປະສານງານ ແລະ ການຮ່ວມມືຫຼາຍຂະແໜງການ, ພິເສດແມ່ນຂະແໜງສຶກສາ, ກະສິກຳ, ສາທາລະນະສຸກ. ເປົ້າໝາຍລວມຂອງແຜນ NPAN ນີ້ ແມ່ນເພື່ອຫຼຸດຜ່ອນການຂາດສານອາຫານໃນແມ່ຍິງ ແລະ ເດັກນ້ອຍ ພ້ອມທັງປັບປຸງສະພາບໂພຊະນາການຂອງປະຊາຊົນລາວທຸກຄົນ ເພື່ອໃຫ້ມີສຸຂະພາບແຂງແຮງ ແລະ ມີຄຸນນະພາບຊີວິດທີ່ດີຂື້ນ, ເຊິ່ງຈະປະກອບສ່ວນເພື່ອໃຫ້ບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນປີ 2025.

ບັນດາບຸລິມະສິດສຳຄັນໃນ NPAN 2021–2025 ບໍ່ໄດ້ປ່ຽນແປງຈາກທີ່ໄດ້ລະບຸໄວ້ໃນແຜນ NPAN 2016–2020. ແນວໃດກໍ່ຕາມ, ກໍມີການຕື່ມເປົ້າໝາຍຍຸດທະສາດໃໝ່ທີ່ຕິດພັນກັບໂພຊະນາການ ໃນເວລາທີ່ເກີດໄພພິບັດ ແລະ ພາວະສຸກເສີນ, ການປ່ຽນແປງຂອງສະພາບດິນຟ້າອາກາດ; ການສື່ສານເພື່ອການປ່ຽນແປງພຶດຕິກຳ ແລະ ສັງຄົມ; ແລະ ຄວາມສະເໝີພາບບົດບາດຍິງຊາຍ. ບັນດາບູລິມະສິດສຳຄັນ ແມ່ນໄດ້ລະບຸໄວ້ຂ້າງລຸ່ມນີ້:

1. ປັບປຸງການໄດ້ຮັບສານອາຫານ
2. ປັບປຸງນ້ຳ ແລະ ສຸຂະພິບານ, ຊຸກຍູ້ວຽກງານສຸຂະອານາໄມ, ປ້ອງກັນ ແລະ ຄວບຄຸມພະຍາດ.
3. ເພີ່ມທະວີການມີ ແລະ ການເຂົ້າເຖິງອາຫານທີ່ມີໂພຊະນາການ.
4. ປັບປຸງພຶດຕິກຳຂອງເດັກ ແລະ ໄວໜຸ່ມ ແລະ ຄວາມຮູ້ຂອງພວກເຂົາກ່ຽວກັບການກິນອາຫານທີ່ມີໂພຊະນາການ.
5. ປັບປຸງການດູແລ ແລະ ສຸຂະພາບຂອງແມ່ ແລະ ເດັກ.

6. ເສີມສ້າງຄວາມເຂັ້ມແຂງດ້ານໂຄງສ້າງການຈັດຕັ້ງ, ການຄຸ້ມຄອງ, ການບໍລິຫານ, ແລະ ການປະສານງານ.
7. ເສີມສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດ.
8. ປັບປຸງລະບົບການບໍລິການສາທາລະນະສຸກສຳລັບຊຸມຊົນ.
9. ປັບປຸງການຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ເພື່ອເປັນບ່ອນອີງໃນການຕັດສິນໃຈ.
10. ປັບປຸງການຄຸ້ມຄອງການເງິນ ແລະ ເພີ່ມທະວີການລົງທຶນ.
11. ຮັບປະກັນການກຽມພ້ອມເພື່ອຮັບມືກັບໄພພິບັດ ແລະ ເຫດການສຸກເສີນ, ລວມທັງການປົກປ້ອງສັງຄົມຢ່າງມີປະສິດທິຜົນ.
12. ຂະຫຍາຍການສື່ສານທາງສັງຄົມ ເພື່ອການປ່ຽນແປງພຶດຕິກຳດ້ານໂພຊະນາການ (SBCC).
13. ສົ່ງເສີມຄວາມສະເໝີພາບຍິງຊາຍ.

## 1.5 ຈຸດປະສົງຂອງຄິດໄລ່ຕົ້ນທຶນສໍາລັບແຜນ NPAN II

ຈຸດປະສົງຂອງການຄິດໄລ່ຕົ້ນທຶນຄັ້ງນີ້ ແມ່ນເພື່ອຄາດຄະເນທຶນທີ່ຕ້ອງການເພື່ອຈັດຕັ້ງປະຕິບັດວຽກງານບູລິມະສິດ ແລະ ບັນລຸ ເປົ້າໝາຍຂອງແຜນ NPAN 2021–2025. ການວິເຄາະຄິດໄລ່ຕົ້ນທຶນ ສາມາດນຳໃຊ້ເພື່ອລະດົມທຶນ, ຈັດສັນງົບປະມານ, ວັດແທກປະສິດທິພາບ, ແລະ ປະສານງານກັບຄູ່ຮ່ວມງານ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ.

ຕົ້ນທຶນສຳລັບການປະຕິບັດ NPAN II ແຍກໄປຕາມຈຸດປະສົງ, ກິດຈະກຳ, ປີການຈັດຕັ້ງປະຕິບັດ ແລະ ປະເພດ/ສິ່ງທີ່ຕ້ອງເຮັດ ເພື່ອໃຫ້ເຂົ້າໃຈວ່າ ອັນໃດເປັນຕົວຂັບເຄື່ອນຄ່າໃຊ້ຈ່າຍ ແລະ ຊ່ອງຫວ່າງດ້ານທຶນຮອນທີ່ອາດຈະເກີດຂຶ້ນ. ຕົ້ນທຶນຂອງແຜນ NPAN ຍັງສາມາດແຍກໄປຕາມຂະແໜງການ, ຜູ້ຈັດຕັ້ງປະຕິບັດ, ສະຖານທີ່, ແລະ ຮ່ວງງົບປະມານ ເພື່ອເປັນການປັບປຸງຂຶ້ນແຜນນຳໃຊ້ຊັບພະຍາກອນ.

## 1.6 ໂຄງສ້າງຂອງບົດລາຍງານສະບັບນີ້

ບົດລາຍງານນີ້ມີໂຄງສ້າງດັ່ງຕໍ່ໄປນີ້. ພາກທີສອງ ແມ່ນອະທິບາຍວິທີການທີ່ໃຊ້ເພື່ອຈັດລຽງບູລິມະສິດ ແລະ ຄິດໄລ່ຕົ້ນທຶນສຳລັບກິດຈະກຳໃນແຜນ NPAN. ພາກທີສາມ ສະເໜີຜົນຂອງການຄິດໄລ່ຕົ້ນທຶນ. ສ່ວນພາກທີສີ່ ຈະສະຫຼຸບຜົນການຄົ້ນພົບທີ່ສຳຄັນ ແລະ ຂໍ້ຈຳກັດໃນການຄິດໄລ່ຕົ້ນທຶນ.

# 2. ວິທີການ

ພາກນີ້ອະທິບາຍວ່າ ກິດຈະກຳໃນແຜນ NPAN 2021–2025 ໄດ້ຖືກຈັດບູລິມະສິດແນວໃດ ແລະ ວິທີການທີ່ໃຊ້ໃນການຄິດໄລ່ຕົ້ນທຶນແບບລຸ່ມຂຶ້ນເທິງ.

## 2.1 ຂະບວນການຈັດລຽງບູລິມະສິດສຳລັບແຜນ NPAN 2021-2025

ແຜນ NPAN 2021–2015 ແມ່ນແຜນລວມເພື່ອແກ້ໄຂບັນຫາຕ່າງໆໃນຫຼາຍໆຂະແໜງການທີ່ພາໃຫ້ເກີດການຂາດສານອາຫານໃນລາວ. ເຖິງແມ່ນວ່າແຜນນີ້ຈະຄົບຖ້ວນ, ແຕ່ກໍ່ຍັງຕ້ອງມີການຈັດບູລິມະສິດເພື່ອຫຼຸດຜ່ອນຄວາມຊໍ້າຊ້ອນຂອງວຽກງານ ແລະ ກິດຈະກຳ, ຮັບປະກັນການວາງແຜນ ແລະ ຄິດໄລ່ຕົ້ນທຶນທີ່ພຽງພໍຕໍ່ຄວາມຕ້ອງການທີ່ຈະລົງທຶນໃສ່ວຽກງານມີຜົນຮັບດ້ານໂພຊະນາການສູງສຸດ, ພ້ອມທັງອະທິບາຍແຈ້ງກ່ຽວກັບໜ້າທີ່ຮັບຜິດຊອບ ແລະ ຄວາມສຳຄັນຂອງການຮ່ວມມືຫຼາຍຂະແໜງການ. ທີ່ຜ່ານມາມີກິດຈະກຳຈຳນວນໜຶ່ງທີ່ໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງຈາກລັດຖະບານລາວຕະຫຼອດ, ເຊັ່ນການສະໜອງອາຫານທ່ຽງໃນໂຮງຮຽນ, ທີ່ອາດຈະບໍ່ແມ່ນວຽກງານທີ່ຄຸ້ມຄ່າຕໍ່ການລົງທຶນ ອີງຕາມບົດຄົ້ນຄວ້າຈາກທົ່ວໂລກ.[2] ນອກຈາກນັ້ນ, ເພື່ອປະເມີນຄວາມຕ້ອງການດ້ານການເງິນ ແລະ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ NPAN, ຕ້ອງໄດ້ກຳນົດກິດຈະກຳ ແລະ ເປົ້າໝາຍສຳຄັນຂອງມັນໃຫ້ດີໆ. ການຈັດລຽງບູລິມະສິດ ຊ່ວຍໃຫ້ລັດຖະບານສາມາດພິຈາລະນາລະອຽດຕື່ມວ່າ ຈະປະຕິບັດແຜນ NPAN ໄດ້ແນວໃດ.

ຂະບວນການກຳນົດກິດຈະກຳທີ່ມີຄວາມສຳຄັນສູງສຸດ ປະກອບດ້ວຍຂັ້ນຕອນດັ່ງຕໍ່ໄປນີ້:

1. ກວດເບິ່ງວ່າກິດຈະກຳເຫຼົ່ານັ້ນສອດຄ່ອງກັບຍຸດທະສາດແຫ່ງຊາດດ້ານໂພຊະນາການຫຼືບໍ່: *ກິດຈະກຳນັ້ນຂຶ້ນກັບນະໂຍບາຍອັນໃດ?*

2. ກວດເບິ່ງວ່າຕົວຊີ້ບອກສຳລັບແຕ່ລະກິດຈະກຳມີຄວາມຈະແຈ້ງ ແລະ ຄວາມສອດຄ່ອງຫຼືບໍ່: *ຕົວຊີ້ບອກນັ້ນສາມາດວັດແທກເປົ້າໝາຍທີ່ຢາກປັບປຸງບໍ່?*

3. ຖາມເບິ່ງວ່າຕົວຊີ້ບອກໂຕໃດທີ່ເປັນປັດໄຈໃນການຄັດເລືອກກິດຈະກຳ: *ກິດຈະກຳໃດທີ່ດີທີ່ສຸດ ທີ່ຈະຊ່ວຍເລັ່ງໃຫ້ບັນລຸເປົ້າໝາຍທີ່ລະບຸໄວ້?*

4. ກວດເບິ່ງວ່າກິດຈະກຳທີ່ເລືອກປະຕິບັດໃນຂະແໜງສາທາລະນະສຸກ ແມ່ນຢູ່ໃນລາຍການວຽກງານດ້ານໂພຊະນາການທີ່ຈຳເປັນຂອງອົງການອານາໄມໂລກ ປີ 2019 ແລະ ບົດຄົ້ນຄວ້າ Lancet Series ປີ 2021, ສ່ວນວຽກງານ ແລະ ກິດຈະກຳທີ່ບໍ່ແມ່ນວຽກສາທາລະນະສຸກ ແມ່ນອີງໃສ່ບົດຮຽນຂອງອົງການ FAO ແລະ ອົງການຈັດຕັ້ງອື່ນໆທີ່ມີຜົນດີຕໍ່ໂພຊະນາການ: *ກິດຈະກຳທີ່ເລືອກແມ່ນມີຜົນຮັບສູງສຸດບໍ່?*

2 ກິດຈະກຳອື່ນໆທີ່ພິສູດແລ້ວວ່າ ບໍ່ເໝາະສົມທີ່ຈະລວມຢູ່ໃນລາຍການກິດຈະກຳທີ່ເປັນບູລິມະສິດສຳລັບຄິດໄລ່ຕົ້ນທຶນ ປະກອບມີ: ສີ່ກິດຈະກຳກ່ຽວກັບການເສີມຈຸນລະສານອາຫານໃນກຸ່ມກິດຈະກຳ 2, ການສຳຫຼວດແມ່ທ້ອງໃນກຸ່ມກິດຈະກຳ 4, ກິດຈະກຳລິເລີ່ມທີ່ຮ່ວມເອົາວຽກງານດ້ານສາທາລະນະສຸກ ແລະ ການສຶກສາ ແລະ ການປັບປຸງລະບົບຂໍ້ມູນຂ່າວສານທີ່ບໍ່ຈະແຈ້ງວ່າຈະເຮັດແນວໃດ ພາຍໃຕ້ກຸ່ມກິດຈະກຳ 10, ກິດຈະກຳປ້ອງກັນການເປັນພະຍາດບໍ່ຕິດໃນກຸ່ມກິດຈະກຳ 13, ກິດຈະກຳກ່ຽວກັບການສ້າງກຸ່ມຜູ້ຜະລິດໃນກຸ່ມກິດຈະກຳ ທີ 5, ກິດຈະກຳຈຳນວນໜຶ່ງທີ່ກ່ຽວຂ້ອງກັບລະບຽບການ ແລະ ລະບົບຂໍ້ມູນຂ່າວສານ ແລະ ການສຳຫລວດພຶດຕິກຳການບໍລິໂພກພາຍໃຕ້ກຸ່ມກິດຈະກຳ ທີ 6, ການສຶກສາ ແລະ ກິດຈະກຳການຕິດຕາມ ແລະ ປະເມີນຜົນກຸ່ມກິດຈະກຳ ທີ 8, ການທົບທວນຄືນ, ການສຶກສາຄວາມເປັນໄປໄດ້ ແລະ ການປະເມີນຄວາມຕ້ອງການພາຍໃຕ້ກຸ່ມກິດຈະກຳ ທີ 9, ແລະ ການປັບປຸງຫ້ອງອ່ານໜັງສືຢູ່ໃນໂຮງຮຽນພາຍໃຕ້ກຸ່ມກິດຈະກຳທີ 12.

ຜົນຮັບຈາກການຄັດເລືອກກິດຈະກຳທີ່ເປັນບູລິມະສິດສູງສຸດ ແມ່ນການໄດ້ຮັບການສະໜັບສະໜູນຈາກລັດຖະບານ ແລະ ຄູ່ຮ່ວມງານ. ເມື່ອໃດທີ່ກຳນົດໄດ້ກິດຈະກິດສຳຄັນເປັນຈຳນວນບໍ່ຫຼາຍ ຈຶ່ງສາມາດໝັ້ນໃຈໄດ້ຫຼາຍກວ່າ ວ່າກິດຈະກຳເຫຼົ່ານັ້ນຈະໄດ້ຮັບການສະໜອງທຶນ ແລະ ຈັດຕັ້ງປະຕິບັດ.

ແຜນ NPAN 2021–2025 ສະບັບຮ່າງ ມີທັງໝົດ 23 ກຸ່ມກິດຈະກຳ ແລະ 263 ກິດຈະກຳ, ແຕ່ຍັງບໍ່ທັນມີແຜນປະຕິບັດງານເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດຕົວຈິງ. ຫຼັງຈາກທີ່ເຮັດການຈັດລຽງບູລິມະສິດແລ້ວ, ມີ 85 ກິດຈະກຳ ໄດ້ຮັບການກຳນົດໃຫ້ເປັນບຸລິມະສິດ. ກິດຈະກຳສ່ວນໃຫຍ່ໄດ້ຖືກລວມເຂົ້າກັນເພື່ອຄວາມກະຈ່າງແຈ້ງ ແລະ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ດີຂຶ້ນ. ຕົວຢ່າງເຊັ່ນ: ການຝຶກອົບຮົມຫຼາຍໆຄັ້ງຖືກວາງແຜນໄວ້ສຳລັບຫຼາຍໆກຸ່ມຜູ້ຊົມເຂົ້າຮ່ວມທີ່ແຕກຕ່າງກັນ ໄດ້ຖືກລວມເຂົ້າເປັນກິດຈະກຳດຽວຖ້າຫາກວ່າມັນແມ່ນຫົວຂໍ້ດຽວກັນ. ໃນທຳນອງດຽວກັນ, ກິດຈະກຳທີ່ດຳເນີນຢູ່ໃນໂຮງໝໍ ແລະ ໂຮງຮຽນມັກຈະຖືກລວມເຂົ້າກັນເປັນກິດຈະກຳດຽວ (ເຊັ່ນ: ການກໍ່ສ້າງບ່ອນລ້າງມືຢູ່ໃນໂຮງໝໍ ແລະ ໂຮງຮຽນ ພາຍໃຕ້ບູລິມະສິດທີ 3). ກິດຈະກຳບູລິມະສິດສຳລັບຄິດໄລ່ຕົ້ນທຶນ ລວມມີວຽກງານດ້ານໂພຊະນາການທາງກົງ ແລະ ທາງອ້ອມ, ເຊັ່ນດຽວກັນກັບວຽກງານຕ່າງໆ (ຕົວຢ່າງເຊັ່ນ: ການຝຶກອົບຮົມ, ການສ້າງຄູ່ມືແນະນຳ, ແລະ ອື່ນໆ) ທີ່ຊຸກຍູ້ການຈັດຕັ້ງປະຕິບັດໃນຫຼາຍຂະແໜງການທີ່ພິສູດວ່າ ໄດ້ຜົນດີ ຫຼື ສົມເຫດສົມຜົນທີ່ຈະລວມເຂົ້າເປັນບູລິມະສິດ. ທຸກໆກິດຈະກຳບູລິມະສິດໄດ້ຖືກທົບທວນຄືນ ແລະ ປຶກສາຫາລືກັບຜູ້ຕາງໜ້າຂອງອົງການຈັດຕັ້ງລັດຈາກແຕ່ລະຂະແໜງການ.

## 2.2 ວິທີການຄິດໄລ່ຕົ້ນທຶນ

ອີງຕາມຂັ້ນຕອນການຈັດລຽງບູລິມະສິດ, ທີມງານຄິດໄລ່ຕົ້ນທຶນໄດ້ສ້າງເຄື່ອງມືສຳລັບຄິດໄລ່ຕົ້ນທຶນເປັນພາສາລາວ, ຈັດລຽງກິດຈະກຳທີ່ເປັນບູລິມະສິດ, ເກັບກຳ ແລະ ວິເຄາະຂໍ້ມູນທີ່ໄດ້ຮັບ, ແລະ ຄິດໄລ່ຕົ້ນທຶນຂອງແຕ່ລະກິດຈະກຳ ເພື່ອການປຶກສາຫາລື ແລະ ກວດຢັ້ງຢືນ (ເບິ່ງຂະບວນການໃນຮູບສະແດງທີ 1). ຕະຫຼອດໄລຍະເວລາທີ່ດຳເນີນການຄິດໄລ່ຕົ້ນທຶນ, ທີມງານໄດ້ເນັ້ນໜັກເຖິງການສ້າງຄວາມສາມາດ ເພື່ອໃຫ້ການຈັດຕັ້ງລັດສາມາດນຳໃຊ້ເຄື່ອງມືຄິດໄລ່ຕົ້ນທຶນສຳລັບແຜນ NPAN ໃນອານາຄົດ. ໃນວັນທີ 1 ກັນຍາ 2022, ທີມງານຄິດໄລ່ຕົ້ນທຶນໄດ້ຈັດຝຶກອົບຮົມໃຫ້ແກ່ພະນັກງານລັດ ເພື່ອ 1) ຊ່ວຍໃຫ້ພະນັກງານຮູ້ກ່ຽວກັບການຄິດໄລ່ຕົ້ນທຶນທີ່ໄດ້ຜົນດີທີ່ສຸດ, ເຊິ່ງລວມທັງວິທີການຄິດໄລ່ຕົ້ນທຶນ ແລະ ເຄື່ອງມືທີ່ມີໃຊ້ໃນປະຈຸບັນເພື່ອຄິດໄລ່ຕົ້ນທຶນສຳລັບວຽກງານດ້ານໂພຊະນາການ ແລະ 2) ພະນັກງານໃຫ້ສາມາດນຳໃຊ້ເຄື່ອງມືຄິດໄລ່ຕົ້ນທຶນສຳລັບແຜນ NPAN ເພື່ອຄິດໄລ່ຕົ້ນທຶນຂອງວຽກງານໂພຊະນາການຫຼາຍຂະແໜງການ. ເພື່ອໃຫ້ມີການນຳໃຊ້ເຄື່ອງມືຄິດໄລ່ຕົ້ນທຶນຢ່າງເປັນລະບົບ, ມັນຈຳເປັນຕ້ອງໄດ້ມີໜ່ວຍງານທີ່ຮັບຜິດຊອບວຽກນີ້ໂດຍສະເພາະ ແລະ ສ້າງແຜນທີ່ຈະກຳນົດວິທີການ ແລະ ເວລາທີ່ຈະປັບປຸງສົມມຸດຕິຖານໃນການຄິດໄລ່.

**ຮູບສະແດງທີ 1. ຂະບວນການຄິດໄລ່ຕົ້ນທຶນສຳລັບແຜນ NPAN**




*ແຫຼ່ງຂໍ້ມູນ: OPM ທີມງານຄິດໄລ່ ແຜນປະຕິບັດງານແຫ່ງຊາດໂພຊະນາການ 2021–2025*

## 2.2.1 ຂອບເຂດວຽກງານການຄິດໄລ່ຕົ້ນທຶນ

**ວິທີການຄິດໄລ່ຕົ້ນທຶນແບບແຕ່ລຸ່ມຂຶ້ນເທິງ** (ເອີ້ນອີກຢ່າງໜຶ່ງວ່າ ວິທີຄິດໄລ່ແບບ "ອີງຕາມສ່ວນປະກອບ" ຫຼື "ອີງຕາມສິ່ງທີ່ເອົາເຂົ້າໃສ່ກິດຈະກຳ") ໄດ້ຖືກເລືອກມາໃຊ້ຄິດໄລ່ຕົ້ນທຶນຂອງກິດຈະກຳໃນແຜນ NPAN 2021–2025. ເມື່ອໃຊ້ວິທີການຄິດໄລ່ຕົ້ນທຶນແບບແຕ່ລຸ່ມຂຶ້ນເທິງ , ຕົວເລກຕົ້ນທຶນແມ່ນໄດ້ຈາກການກຳນົດປະເພດຂອງສິ່ງທີ່ໃຊ້ເຂົ້າໃນການປະຕິບັດກິດຈະກຳ ທີ່ລະບຸຈຳນວນເງິນແລະ ປະລິມານທີ່ຕ້ອງການໃຊ້ພາຍໃນໄລຍະເວລາທີ່ແນ່ນອນ. ຈຸດດີຂອງວິທີການນີ້ ແມ່ນສາມາດປັບຕົ້ນທຶນໄປຕາມການປ່ຽນແປງ ແລະ ຄຸນນະພາບຂອງກິດຈະກຳ.

ການຄິດໄລ່ຕົ້ນທຶນສຳລັບແຜນ NPAN 2021–2025 ໄດ້ຈັດປະເພດຕົ້ນທຶນດັ່ງນີ້:

- **ບຸກຄະລາກອນ** – ລວມມີເງິນເດືອນ ແລະ ເງິນອຸດໜູນຂອງພະນັກງານທີ່ໃຫ້ບໍລິການດ້ານສາທາລະນະສຸກ.
- **ເຄື່ອງໃຊ້ ແລະ ວັດສະດຸ** – ເຄື່ອງຂອງທີ່ຕ້ອງໃຊ້ເລື້ອຍໆໃນການປະຕິບັດກິດຈະກຳ. ເຄື່ອງຂອງທີ່ຕ້ອງໃຊ້ເລື້ອຍໆແມ່ນໝາຍເຖິງເຄື່ອງທີ່ໃຊ້ໝົດພາຍໃນປີງົບປະມານ ແລະ ຕ້ອງໄດ້ຊື້ເຂົ້າມາທົດແທນຢ່າງເປັນປົກກະຕິ.
- **ຄ່າໃຊ້ຈ່າຍທີ່ເປັນທຶນ** – ອຸປະກອນ ແລະ ເຄື່ອງມືຕ່າງໆທີ່ຕ້ອງຊື້ເທື່ອດຽວ ເພື່ອເອົາມາໃຊ້ປະຕິບັດກິດຈະກຳໃນແຜນ NPAN.
- **ການຝຶກອົບຮົມ, ການປຶກສາຫາລື, ແລະ ກອງປະຊຸມ** – ຕົ້ນທຶນທີ່ໃຊ້ເພື່ອດຳເນີນກອງປະຊຸມ ແລະ ຈັດງານທີ່ມີຄົນເຂົ້າຮ່ວມແບບຊ່ອງໜ້າ.

ຕົ້ນທຶນສຳລັບແຜນ NPAN 2021–2025 ແມ່ນຄິດໄລ່ບົນສົມມຸດຕິຖານ ແລະ ຕົວເລກຄ່າໃຊ້ຈ່າຍບາງຢ່າງຈາກການຈັດຕັ້ງປະຕິບັດແຜນ NPAN 2016–2020 ແລະ ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ກ່ຽວກັບການບໍລິການແບບເຊື່ອມສານດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ປີ 2016–2025.

ມີຄ່າໃຊ້ຈ່າຍບາງໂຕທີ່ບໍ່ໄດ້ຖືກລວມເຂົ້າໃນການຄິດໄລ່ຕົ້ນທຶນ, ເຊິ່ງລວມທັງຄ່າແຮງງານທີ່ຕ້ອງໃຊ້ປະຕິບັດແຜນ NPAN ທີ່ມັກຈະກວມເອົາອັດຕາສ່ວນຫຼາຍຂອງການລົງທຶນພາຍໃນຮ່ວງເງິນຂອງລັດຖະບານໃນທຸກໆຂະແໜງການ. ຕົວຢ່າງ: ຄ່າໃຊ້ຈ່າຍດ້ານຊັບພະຍາກອນມະນຸດທີ່ລວມຢູ່ໃນແຜນ NPAN ມີພຽງແຕ່ເງິນເດືອນສຳລັບພະນັກງານສູນໂພຊະນາການ ແລະ ສູນສຸຂະພາບແມ່ ແລະ ເດັກ, ລວມທັງເວລາທີ່ພະນັກງານສາທາລະນະສຸກໃຊ້ເຂົ້າໃນການປະຕິບັດວຽກງານໂພຊະນາການທາງກົງ. ເວລາຂອງພະນັກງານທີ່ເຮັດວຽກຢູ່ນອກຂະແໜງສາທາລະນະສຸກ ແມ່ນບໍ່ໄດ້ລວມເຂົ້າ. ດັ່ງນັ້ນ, ການຄິດໄລ່ຕົ້ນທຶນສຳລັບແຜນ NPAN 2021–2025 ແມ່ນການຄາດຄະເນທີ່ຫນ້ອຍຫຼາຍ ສຳລັບຄວາມຕ້ອງການທາງດ້ານການເງິນທັງຫມົດທີ່ໃຊ້ເພື່ອປະຕິບັດກິດຈະກຳໃຫ້ບັນລຸເປົ້າຫມາຍຂອງແຜນ NPAN.

ນອກຈາກນັ້ນ, ຍັງບໍ່ສາມາດປຽບທຽບຕົ້ນທຶນຂອງກິດຈະກຳໃນແຜນ NPAN ກັບຕົ້ນທຶນຄາດຄະເນຂອງກິດຈະກຳໃນແຜນ NPAN ທີ່ລົງທຶນໂດຍລັດຖະບານ ແລະ ຜູ້ໃຫ້ທຶນ ເນື່ອງຈາກວ່າປະເພດຂອງຄ່າໃຊ້ຈ່າຍທີ່ເອົາມາຄິດໄລ່ຕົ້ນທຶນ ມີຄວາມແຕກຕ່າງກັນ. ຕົວຢ່າງ: ການລົງທຶນຂອງຜູ້ໃຫ້ທຶນໃນດ້ານໂພຊະນາການ ລວມມີຄ່າໃຊ້ຈ່າຍວຽກບໍລິຫານ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ, ເຊິ່ງເປັນຕົ້ນທຶນທີ່ແຜນ NPAN ບໍ່ລວມເອົາ. ອີກທັງກິດຈະກຳທີ່ໄດ້ຮັບທຶນຈາກຜູ້ໃຫ້ທຶນຈຳນວນຫຼາຍ ບໍ່ໄດ້ລວມເຂົ້າເປັນກິດຈະກຳບູລິມະສິດໃນແຜນ NPAN. ສະນັ້ນ, ມັນຈຳເປັນຕ້ອງໄດ້ຄິດໄລ່ເພີ່ມຕື່ມ ເພື່ອໄຈ້ແຍກວ່າຕົ້ນທຶນຂອງກິດຈະກຳໃນແຜນ NPAN ແມ່ນສອດຄ່ອງກັບຮ່ວງງົບປະມານ ແລະ ລາຍຈ່າຍອັນໃດ ເພື່ອໃຫ້ຮູ້ໄດ້ວ່າຈະເກີດຊ່ອງຫວ່າງໃນການສະໜອງທຶນຫຼືບໍ່.

### 2.2.2 ເຄື່ອງມືຄິດໄລ່ຕົ້ນທຶນທີ່ດັດປັບສຳລັບແຜນ NPAN

ປະເທດລາວມີເຄື່ອງມືຄິດໄລ່ຕົ້ນທຶນຂອງວຽກງານດ້ານໂພຊະນາການຫຼາຍອັນທີ່ສາມາດໃຊ້ໄດ້. ເຄື່ອງມືບາງອັນບໍ່ເໝາະສົມທີ່ຈະໃຊ້ຄິດໄລ່ຕົ້ນທຶນຂອງແຜນ NPAN ຍ້ອນວ່າມັນໃຊ້ສະເພາະຄິດໄລ່ວຽກງານໂພຊະນາການທາງກົງ. ເຊິ່ງລວມມີ: ເຄື່ອງມືທີ່ໃຊ້ຄິດໄລ່ຕົ້ນທຶນການຊ່ວຍເຫຼືອດ້ານວິຊາການສຳລັບວຽກງານອາຫານ ແລະ ໂພຊະນາການ (FANTA) ເພື່ອຄຸ້ມຄອງການຂາດສານອາຫານກະທັນຫັນໃນຊຸມຊົນ (CMAM), ເຄື່ອງມືສາກົນສຳລັບຄິດໄລ່ຕົ້ນທຶນຂອງວຽກງານລ້ຽງລູກດ້ວຍນົມແມ່ (WBCi) ແລະ ເຄື່ອງມືຄິດໄລ່ຕົ້ນທຶນສຳລັບວຽກງານເສີມຈຸນລະສານອາຫານ (MINIMOD). ມີເຄື່ອງມືສອງຊຸດທີ່ສາມາດໃຊ້ຄິດໄລ່ຕົ້ນທຶນວຽກງານດ້ານໂພຊະນາການໄດ້ຢ່າງກວ້າງຂວາງ: ການຄິດໄລ່ຕົ້ນທຶນເພື່ອເພີ່ມປະສິດທິພາບໃນການປະເມີນຜົນຮັບທາງເສດຖະກິດສຳລັບຍຸດທະສາດໂພຊະນາການແບບໜຶ່ງດຽວ (SEEMS-Nutrition) ແລະ ເຄື່ອງມືຄິດໄລ່ຕົ້ນທຶນວຽກສາທາລະນະສຸກແບບໜຶ່ງດຽວ. ຢ່າງໃດກໍຕາມ, ເຄື່ອງມືເຫຼົ່ານີ້ຍັງມີຂໍ້ຈຳກັດ. ເຄື່ອງມື SEEMS-Nutrition ຈະເນັ້ນໃຊ້ວິທີການແບບເສດຖະສາດຫຼາຍກວ່າໃຊ້ວິທີການທາງດ້ານການເງິນ ເພື່ອຄິດໄລ່ຕົ້ນທຶນສຳລັບວຽກງານໂພຊະນາການໃນຊ່ວງເວລາໃດໜຶ່ງ, ສ່ວນເຄື່ອງມື OneHealth ແມ່ນມີແຕ່ໃຊ້ຢູ່ໃນຂະແໜງສາທາລະນະສຸກ.

ເພື່ອຕອບສະໜອງຄວາມຕ້ອງການຂອງລັດຖະບານລາວ, ທີມງານຄິດໄລ່ຕົ້ນທຶນໄດ້ຕັດສິນໃຈສ້າງເຄື່ອງມືທີ່ໃຊ້ໂປຣແກຣມ Excel, ໂດຍອີງໃສ່ບົດຮຽນການຄິດໄລ່ຕົ້ນທຶນວຽກງານໂພຊະນາການທີ່ໃຊ້ເຄື່ອງມືທີ່ມີຢູ່ປະຈຸບັນ, ແລະດັດປັບໃຫ້ແທດເໝາະກັບແຜນ NPAN. ເຄື່ອງມືຄິດໄລ່ຕົ້ນທຶນທີ່ໃຊ້ Excel ນີ້ ສາມາດໃຫ້ຜູ້ມີສ່ວນຮ່ວມເຂົ້າເຖິງ ແລະ ແລະ ຕື່ມຂໍ້ມູນໃສ່ໄດ້ທັນເວລາ ເນື່ອງຈາກວ່າບູລິມະສິດ ແລະ ເປົ້າໝາຍ ອາດຈະປ່ຽນແປງໄປຕາມແຕ່ລະໄລຍະ. ມັນຍັງເປັນວິທີທີ່ອະນຸຍາດໃຫ້ຫຼາຍຄົນປ້ອນຂໍ້ມູນຕົ້ນທຶນເຂົ້າພ້ອມກັນໄດ້ໃນເວລາດຽວ. ເຄື່ອງມືນີ້ໄດ້ໃຊ້ຜົນການຄິດໄລ່ຕົ້ນທຶນຈາກ OneHealth ເພື່ອຄາດຄະເນຕົ້ນທຶນທີ່ຕ້ອງໃຊ້ເຂົ້າໃນການບໍລິການສຸຂະພາບໂດຍກົງ (ຕົວຢ່າງ: ການໃຫ້ຈຸນລະສານອາຫານເສີມ, ການປິ່ນປົວອາການຂາດສານອາຫານ).

ສຳຄັນແມ່ນຕ້ອງຈື່ວ່າ ເຄື່ອງມືນີ້ບໍ່ໄດ້ຊ້ຳກັນກັບເຄື່ອງມືສຳລັບການຂຶ້ນງົບປະມານ ແລະ ຕິດຕາມລາຍຈ່າຍ. ເຄື່ອງມືຕິດຕາມຂໍ້ມູນອື່ນໆສາມາດສະໜອງຂໍ້ມູນທີ່ໃຊ້ເຄື່ອງມືນີ້ຄິດໄລ່ຕົ້ນທຶນໄດ້. ໃນຄວາມເປັນຈິງ, ການຂຶ້ນງົບປະມານແມ່ນປີລະເທື່ອ ແລະ ອາດຈະບໍ່ສອດຄ່ອງກັບຍຸດທະສາດ ຫຼື ເປົ້າຫມາຍທີ່ຕ້ອງການບັນລຸ; ສ່ວນການຕິດຕາມລາຍຈ່າຍແມ່ນຕ້ອງໄດ້ແຍກຕ່າງຫາກ ເພື່ອເບິ່ງວ່າມີການໃຊ້ຈ່າຍຫຼາຍປານໃດ, ແທນທີ່ຈະເບິ່ງວ່າມີຄວາມຕ້ອງການທຶນຫຼາຍປານໃດໃນອານາຄົດ. ເຄື່ອງມືຄິດໄລ່ຕົ້ນທຶນສຳລັບແຜນ NPAN ຈຳເປັນຕ້ອງມີ ເພື່ອຊ່ວຍໃຫ້ຮູ້ວ່າຕ້ອງໃຊ້ທຶນຫຼາຍປານໃດໃນປີຕໍ່ໆໄປ ຈົນກວ່າຈະບັນລຸຈຸດປະສົງ ແລະ ເປົ້າໝາຍຂອງວຽກງານໂພຊະນາການທີ່ຢາກໄດ້, ເຊິ່ງເຄື່ອງມືນີ້ຈະຕ້ອງໄດ້ນຳໃຊ້ໃນໄລຍະຕົ້ນ ແລະ ກາງຂອງການສ້າງ/ການຈັດຕັ້ງປະຕິບັດແຜນ NPAN.

ຄຸນລັກສະນະຫຼັກຂອງເຄື່ອງມືນີ້ ແມ່ນມັນເປັນສອງພາສາ - ອັງກິດ ແລະ ລາວ, ຕົ້ນທຶນແມ່ນຄິດໄລ່ເປັນເງິນກີບ, ແລະ ທຸກປ່ອງທີ່ໃຫ້ປ້ອນຂໍ້ມູນ (ເຊັ່ນ: ກິດຈະກຳ, ປະເພດສິ່ງທີ່ຕ້ອງໃຊ້, ລາຄາຫົວໜ່ວຍ ແລະ ອື່ນໆ) ສາມາດແກ້ໄຂໄດ້. ເຄື່ອງມືນີ້ມີຫ້າພາກແຍກໃສ່ແຕ່ລະແຖບໃນໂປຣແກຣມ Excel ຄື: ຄຳແນະນຳ, ແຜນການເຄື່ອນໄຫວ, ສິ່ງທີ່ຕ້ອງໃຊ້, ລາຄາຕົ້ນທຶນ ແລະ ສະຫຼຸບລວມຜົນໄດ້ຮັບ.

### 2.2.3 ຂໍ້ມູນ ແລະ ສິ່ງທີ່ໃຊ້ໃນການຄິດໄລ່ຕົ້ນທຶນ

ທີມງານຄິດໄລ່ຕົ້ນທຶນໄດ້ເຮັດການສຳພາດ ແລະ ທົບທວນຄືນເອກະສານເພື່ອດຳເນີນການຄິດໄລ່ຕົ້ນທຶນໃຫ້ສຳເລັດ. ຕາຕະລາງທີ 1 ສະຫຼຸບຂໍ້ມູນທີ່ຕ້ອງການເພື່ອໃຊ້ຄິດໄລ່ຕົ້ນທຶນສຳລັບ NPAN. ໃນເດືອນເມສາ 2022 ທີມງານຄິດໄລ່ຕົ້ນທຶນໄດ້ຈັດກອງປະຊຸມກັບຜູ້ຕາງໜ້າຈາກອົງການຈັດຕັ້ງລັດໃນທຸກໆຂະແໜງການ ເພື່ອໄຈ້ແຍກເບິ່ງສິ່ງທີ່ຕ້ອງໃຊ້ໃນຈັດຕັ້ງປະຕິບັດກິດຈະກຳ ແລະ ຄ່າໃຊ້ຈ່າຍ. ໄດ້ເຮັດການສຳພາດຕາມຫຼັງເພື່ອຕື່ມເຕັມຂໍ້ມູນທີ່ຍັງບໍ່ຄົບຖ້ວນ ແລະ ເຂົ້າໃຈກ່ຽວກັບການດຳເນີນງານຫຼາຍຂຶ້ນ.

ບັນດາຄຳຖາມຕໍ່ໄປນີ້ ໄດ້ຖືກນຳໃຊ້ເພື່ອຖາມເອົາຂໍ້ມູນຂອງແຕ່ລະລະກິດຈະກຳ:

- ຈະຈັດຕັ້ງປະຕິບັດກິດຈະກຳນີ້ເມື່ອໃດ ແລະ ເລື້ອຍປານໃດ?
- ໃຜຈະເປັນຜູ້ປະຕິບັດ?
- ຈະປະຕິບັດຢູ່ໃສ?
- ຕ້ອງໃຊ້ຫຍັງແດ່ໃນການຈັດຕັ້ງປະຕິບັດ?
- ສຳລັບສິ່ງທີ່ຖືກຕ້ອງໃຊ້ຮ່ວມກັນ (ຕົວຢ່າງ: ເວລາຂອງພະນັກງານສາທາລະນະສຸກ), ພະນັກງານຕ້ອງຈັດສັນເວລາໃນອັດຕາສ່ວນເທົ່າໃດສຳລັບກິດຈະກຳນີ້?
- ຄົນ ຫຼື ຜູ້ໄດ້ຮັບຜົນປະໂຫຍດທີ່ຈະເຂົ້າຮ່ວມກິດຈະກຳມີຈັກຄົນ (ຕົວຢ່າງ: ມີ 50 ຄົນທີ່ໄດ້ຮັບການຝຶກອົບຮົມ)?

**ຕາຕະລາງທີ 1. ຂໍ້ມູນທີ່ຕ້ອງການເພື່ອໃຊ້ຄິດໄລ່ຕົ້ນທຶນສຳລັບ NPAN**

| ປະເພດຂໍ້ມູນ | ແຫຼ່ງຂໍ້ມູນ |
|---|---|
| ປະຊາກອນ ແລະ ພະຍາດລະບາດ | ສູນສະຖິຕິແຫ່ງຊາດ - ຖານປະຊາກອນຄາດຄະເນຈາກການສຳຫຼວດປະຊາກອນ ແລະ ສຸຂະພາບ (DHS) ແລະ ບົດຄົ້ນຄວ້າຕ່າງໆ |
| ອັດຕາການປົກຄຸມຂອງແຜນງານ | ລະບົບຄຸ້ມຄອງຂໍ້ມູນ ເຊັ່ນ: DHIS2 ສຳລັບຂໍ້ມູນດ້ານສຸຂະພາບ,<br>ບົດລາຍງານການຕິດຕາມ ແລະ ປະເມີນຜົນຂອງແຜນງານ |
| ປະເພດ, ປະລິມານ, ແລະ ລາຄາຫົວໜ່ວຍຂອງສິ່ງທີ່ຕ້ອງໃຊ້ (ເຊັ່ນ: ເຄື່ອງໃຊ້ເຮັດການບໍລິການ, ເງິນເດືອນ, ແລະ ອື່ນໆ) | ແຜນງົບປະມານ<br>ບົດລາຍງານການໃຊ້ຈ່າຍ<br>ການວິເຄາະຄ່າໃຊ້ຈ່າຍຕ່າງໆ/ລາຄາທຽບຖານ<br>ການສຳພາດຜູ້ໃຫ້ຂໍ້ມູນຫຼັກ (ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບປະເພດ ແລະ ປະລິມານຂອງສິ່ງທີ່ຈຳເປັນຕ້ອງໃຊ້) |
| ແຜນການຂະຫຍາຍການຈັດຕັ້ງປະຕິບັດ ແລະ ເປົ້າໝາຍ | ຍຸດທະສາດ (ສະບັບຮ່າງ)<br>ການສຳພາດຜູ້ໃຫ້ຂໍ້ມູນຫຼັກ |

*ແຫຼ່ງຂໍ້ມູນ: OPM ທີມງານຄິດໄລ່ ແຜນປະຕິບັດງານແຫ່ງຊາດໂພຊະນາການ 2021–2025*

ເນື່ອງຈາກວ່າປະເທດລາວບໍ່ມີຂໍ້ມູນລາຄາຫົວໜ່ວຍສະເພາະຂອງແຕ່ລະກິດຈະກໍາ, ທີມງານຄິດໄລ່ຕົ້ນທຶນສໍາລັບແຜນ NPAN ໄດ້ອາໄສຕົວເລກຄາດຄະເນຈາກປະເທດອື່ນມາຄິດໄລ່. ຕົວຢ່າງ: ຂໍ້ມູນຕົ້ນທຶນຂອງເຄື່ອງໃຊ້ສໍາລັບການໃຫ້ຈຸນລະສານອາຫານເສີມ, ການສັກຢາກັນພະຍາດ, ແລະ ວຽກງານອື່ນໆໃນຂະແໜງສາທາລະນະສຸກ ແມ່ນເອົາມາຈາກຕົວເລກຕົ້ນທຶນສະເລ່ຍຂອງພາກພື້ນທີ່ມີຢູ່ໃນຖານຂໍ້ມູນ OneHealth. ທີມງານຄິດໄລ່ຕົ້ນທຶນຍັງໄດ້ນໍາໃຊ້ຄ່າໃຊ້ຈ່າຍສະເລ່ຍຕໍ່ຫົວໜ່ວຍ ສໍາລັບກິດຈະກໍາ WASH ຈາກການສຶກສາທີ່ດໍາເນີນໃນປະເທດອື່ນໆ. ນໍາໃຊ້ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃນປີ 2021 ແລະ ນໍາໃຊ້ອັດຕາແລກປ່ຽນປີນີ້ ຈົນຮອດປີ 2025. ອັດຕາເງິນເຟີ້ ແມ່ນນໍາໃຊ້ຕົວເລກຄົງທີ່ໃນ 3.8% ແລະ ອັດຕາການແລກປ່ຽນຄົງທີ່ 1 ໂດລາ ເທົ່າກັບ 9.745 ກີບ. ເຄື່ອງມືຄິດໄລ່ຕົ້ນທຶນສໍາລັບແຜນ NPAN ລວມທຸກໆສົມມຸດຕິຖານທີ່ຕ້ອງໃຊ້ໃນການຄິດໄລ່ຕົ້ນທຶນຕໍ່ຫົວໜ່ວຍ ຢູ່ໃນແຖບທີ່ແຍກໄວ້ຕ່າງຫາກ ແລະ ສາມາດປັບປຸງໄດ້ທຸກເວລາ. ຕົວເລກຕົ້ນທຶນຕໍ່ຫົວໜ່ວຍທີ່ຖືກປັບປຸງ ຈະສະແດງຢູ່ໃນແຖບຕົ້ນທຶນໂດຍອັດຕະໂນມັດ.

# 3. ຜົນໄດ້ຮັບ

## 3.1 ຕົ້ນທຶນທີ່ເປັນຈໍານວນລວມ

ຕົ້ນທຶນທັງໝົດສໍາລັບກິດຈະກໍາບູລິມະສິດທີ່ຈະປະຕິບັດ 5 ປີ ໃນແຜນ NPAN 2021–2025 ແມ່ນ 394,4 ລ້ານໂດລາສະຫະລັດ (3.843 ຕື້ກີບ), ຄ່າໃຊ້ຈ່າຍຈະເພີ່ມຂຶ້ນຈາກ 67,1 ລ້ານໂດລາ ໃນປີ 2021 ເປັນ 83,5 ລ້ານໂດລາ ໃນປີ 2025 (ເບິ່ງຮູບສະແດງທີ 2).

**ຮູບສະແດງທີ 2. ຕົ້ນທຶນຕໍ່ປີ ສໍາລັບການປະຕິບັດແຜນ NPAN (ຫົວໜ່ວຍ: ລ້ານໂດລາ)**




*ແຫຼ່ງຂໍ້ມູນ: OPM ທີມງານຄິດໄລ່ ແຜນປະຕິບັດງານແຫ່ງຊາດໂພຊະນາການ 2021–2025*

ກິດຈະກຳຂອງຂະແໜງສາທາລະນະສຸກ ກວມເອົາອັດຕາສ່ວນໃຫຍ່ຂອງຕົ້ນທຶນທັງໝົດສຳລັບແຜນ NPAN ເຊິ່ງຢູ່ທີ່ 69% , ຕາມມາແມ່ນກິດຈະກຳຂອງແຜນງານ WASH (19% ) ແລະ ປູກຝັງ, ລ້ຽງສັດ, ປະມົງ ແລະ ປ່າໄມ້ (7%) (ເບິ່ງຮູບສະແດງທີ 3). ຕົ້ນທຶນຂອງແຜນງານ WASH ເພີ່ມຂຶ້ນຫຼາຍທີ່ສຸດໃນໄລຍະຫ້າປີຂອງແຜນ NPAN, ເຊິ່ງຕົ້ນທຶນຂອງກິດຈະກຳໃນແຜນງານ WASH ທີ່ກ່ຽວຂ້ອງກັບໂພຊະນາການເພີ່ມຂຶ້ນ 99 ຕື້ກີບ ຈາກ 2021 ຫາ 2025. ຄາດວ່າມີປະມານ 69% ຂອງຕົ້ນທຶນທັງໝົດທີ່ຕ້ອງການສຳລັບປະຕິບັດວຽກງານດ້ານໂພຊະນາການທາງກົງ ແລະ ກິດຈະກຳຕ່າງໆທີ່ຊຸກຍູ້ການຈັດຕັ້ງປະຕິບັດ (ຕົວຢ່າງ: ການຝຶກອົບຮົມ).

**ຮູບສະແດງທີ 3. ຕົ້ນທຶນທັງໝົດສຳລັບແຜນ NPAN ຫ້າປີ ແຍກຕາມຂະແໜງການ (ຫົວໜ່ວຍ: ລ້ານໂດລາ)**




*ແຫຼ່ງຂໍ້ມູນ: OPM ທີມງານຄິດໄລ່ ແຜນປະຕິບັດງານແຫ່ງຊາດໂພຊະນາການ 2021–2025*

ປັດໄຈທີ່ເຮັດໃຫ້ຕົ້ນທຶນຂອງແຜນ NPAN ມີມູນຄ່າສູງ ແມ່ນອຸປະກອນ, ການໃຫ້ບໍລິການແລະເຄື່ອງໃຊ້, ແລະເງິນອຸດໜູນ, ດັ່ງທີ່ອະທິບາຍຂ້າງລຸ່ມນີ້.

## 3.2 ຕົ້ນທຶນແຍກຕາມບູລິມະສິດ

ຕາຕະລາງທີ 2 ຂ້າງລຸ່ມນີ້ ສະຫຼຸບຕົ້ນທຶນແຍກຕາມກຸ່ມກິດຈະກຳ. ຕົ້ນທຶນຂອງກຸ່ມກິດຈະກຳ 10 ຖືກລວມຢູ່ໃນຕົ້ນທຶນຂອງກຸ່ມກິດຈະກຳທີ 4 ຍ້ອນວ່າກິດຈະກຳໄດ້ຖືກລວມເຂົ້າກັນເພື່ອຫຼຸດຜ່ອນການຊ້ຳຊ້ອນ. ເບິ່ງຕົ້ນທຶນຂອງແຕ່ລະກິດຈະກຳໃນເອກະສານຊ້ອນທ້າຍ A.

ມີຕົ້ນທຶນສູງສຸດແມ່ນກຸ່ມກິດຈະກຳທີ 16, ທີ່ມີຈຸດປະສົງເພື່ອສົ່ງເສີມການເຊື່ອມສານວຽກໂພຊະນາການເຂົ້າໃນແຜນງານຮັກສາສຸຂະພາບຂັ້ນຕົ້ນ. ກຸ່ມກິດຈະກຳນີ້ຄາດວ່າຈະຕ້ອງໃຊ້ທຶນສູງເຖິງ 223,4 ລ້ານໂດລາສະຫະລັດ (2.177 ຕື້ກີບ) ສຳລັບປະຕິບັດງານເປັນເວລາ 5 ປີ ຕາມແຜນ NPAN, ເຊິ່ງລວມທັງທຶນທີ່ຕ້ອງການໃຊ້ໃນວຽກງານທີ່ຢູ່ໃນຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດສຳລັບການບໍລິການແບບເຊື່ອມສານດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດ ໃໝ່ ແລະ ເດັກນ້ອຍ ປີ 2016–2025 (ບໍ່ໄດ້ລວມເອົາທຶນສຳລັບຈັດຊື້ເຄື່ອງໃຊ້ ເພື່ອປ້ອງກັນການໃຊ້ຈ່າຍຊ້ຳຊ້ອນ).

ກຸ່ມກິດຈະກຳທີ 3 ແມ່ນບູລິມະສິດທີ່ມີຕົ້ນທຶນສູງເປັນອັນດັບ 2, ເຊິ່ງສຸມໃສ່ແຜນງານ WASH ເຊັ່ນ: ການສົ່ງເສີມການນຳໃຊ້ນ້ຳດື່ມທີ່ສະອາດ ແລະ ປອດໄພ ແລະ ການບຳບັດນ້ຳໃນຄົວເຮືອນ (74 ລ້ານໂດລາສະຫະລັດ [723 ຕື້ກີບ] ແຕ່ປີ 2021–2025); ກໍ່ສ້າງລະບົບສະໜອງນ້ຳສະອາດ ແລະ ປອດໄພ, ບ່ອນນ້ຳລ້າງມື ແລະ ຫ້ອງນ້ຳໃນໂຮງໝໍ ແລະ ໂຮງຮຽນ (22 ລ້ານໂດລາສະຫະລັດ [222 ຕື້ກີບ] ແຕ່ປີ 2021–2025), ປັບປຸງແຫຼ່ງນ້ຳ ແລະ ລະບົບສະໜອງນ້ຳ ແລະ ສຸຂາພິບານ ສຳລັບບ້ານທຸກຍາກ ແລະ ບ້ານຊົນນະບົດທີ່ຢູ່ໃນເຂດຈຸດສຸມ (14 ລ້ານໂດລາສະຫະລັດ [140 ຕື້ກີບ] ແຕ່ປີ 2021–2025).

ກຸ່ມກິດຈະກຳທີ່ມີຕົ້ນທຶນສູງອັນດັບ 3 ແມ່ນບູລິມະສິດທີ 5, ທີ່ແນໃສ່ຊຸກຍູ້ການຜະລິດທັນຍະພືດ, ຜັກ, ໝາກໄມ້ທີ່ມີໂພຊະນາການຫຼາກຫຼາຍໂດຍການເຮັດກະເສດອິນຊີ. ກິດຈະກຳໃນບູລິມະສິດນີ້ທີ່ມີຕົ້ນທຶນສູງທີ່ສຸດ ແມ່ນການຝຶກອົບຮົມໃຫ້ແກ່ກຸ່ມຜູ້ຜະລິດຂະໜາດນ້ອຍ ກ່ຽວກັບເຕັກນິກການນຳໃຊ້ນ້ຳຈາກລະບົບຊົນລະປະທານ ແລະ ປັບປຸງການຜະລິດສະບຽງອາຫານໃຫ້ມີຄວາມຫຼາກຫຼາຍສຳລັບຄົວເຮືອນ, ເຊິ່ງມູນຄ່າທຶນທັງໝົດ 24 ລ້ານໂດລາສະຫະລັດ, ຫຼື 235 ຕື້ກີບ, ແຕ່ປີ 2021 ຫາ 2025.



©UNICEF LAOS

### ຕາຕະລາງທີ 2. ຕົ້ນທຶນສຳລັບປະຕິບັດງານເປັນເວລາຫ້າປີຕາມແຜນ NPAN ແຍກຕາມກຸ່ມກິດຈະກຳ (ຫົວໜ່ວຍ: ເງິນກີບ)

| ບູລິມະສິດ | 2021 | 2022 | 2023 | 2024 | 2025 | ຕົ້ນທຶນທັງໝົດ (ກີບ) | ຕົ້ນທຶນທັງໝົດ (ໂດລາ ສະຫະລັດ) |
|---|---|---|---|---|---|---|---|
| 1 – ສົ່ງເສີມໂພຊະນາການຂອງແມ່ຍິງ, ແມ່, ເດັກນ້ອຍ ແລະ ເດັກອ່ອນ | 19,581,634,508 | 21,139,493,623 | 22,621,429,147 | 23,243,232,634 | 23,666,547,316 | 110,252,337,227 | 11,313,734 |
| 2 – ສະໜອງຈຸນລະສານອາຫານເສີມໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ ໃນກຸ່ມເປົ້າໝາຍ | - | - | - | - | - | - | 3,179,692 |
| 3 – ປັບປຸງ ແລະ ເຊື່ອມສານວຽກໂພຊະນາການເຂົ້າໃນແຜນງານ ສຸຂະອານາໄມ, ນ້ຳສະອາດ ແລະ ລະບົບສຸຂາພິບານ; ເພີ່ມທະວີການເຂົ້າເຖິງ ແລະ ສົ່ງເສີມປ່ຽນແປງພຶດຕິກຳ ແລະ ການເຮັດສຸຂະອານາໄມ | 1,125,000,000 | 1,579,226,175 | 2,278,661,715 | 1,387,551,690 | 1,167,750,000 | 7,538,189,580 | 74,253,737 |
| 4 – ປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນເດັກນ້ອຍ ແລະ ສະໜອງຢາຂ້າແມ່ທ້ອງໃຫ້ເດັກນ້ອຍອາຍຸຕ່ຳກວ່າ 5 ປີ | 27,356,000,000 | 28,412,364,360 | 28,837,560,300 | 28,395,528,000 | 28,395,528,000 | 141,396,980,660 | 24,116,264 |
| 5 – ສົ່ງເສີມການຜະລິດທັນຍະພືດ, ຜັກ, ໝາກໄມ້ທີ່ມີໂພຊະນາການຫຼາກຫຼາຍ ໂດຍການເຮັດກະເສດອິນຊີ | 10,085,465,381 | 14,800,651,099 | 21,201,916,303 | 25,379,292,750 | 29,864,554,200 | 101,331,879,733 | 24,145,895 |
| 6 – ສົ່ງເສີມການຜະລິດອາຫານທີ່ມີທາດໂປຼຕີນ ແລະ ແຄວຊຽມ ດ້ວຍການລ້ຽງສັດນ້ອຍ ແລະ ການປະມົງ | - | - | 518,792,400 | 519,000,000 | 186,840,000 | 1,224,632,400 | 368,141 |
| 7 – ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນ, ການຄຸ້ມຄອງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ຜະລິດຕະພັນຈາກປ່າທີ່ບໍ່ແມ່ນໄມ້ ເພື່ອໃຫ້ມີຄວາມຍືນຍົງ. | 1,659,670,599 | 1,722,738,082 | 2,731,591,042 | 6,393,738,082 | 4,836,738,082 | 17,344,475,886 | 488,001 |
| 8 – ສົ່ງເສີມລະບົບຕ່ອງໂສ້ທີ່ເພີ່ມມູນຄ່າໃຫ້ແກ່ການເຮັດກະສິກຳເພື່ອໂພຊະນາການ | 421,893,872,969 | 437,930,271,724 | 439,121,011,429 | 439,124,106,070 | 439,126,866,452 | 2,177,196,128,645 | 972,546 |
| 9 – ສົ່ງເສີມການກິນອາຫານທີ່ມີໂພຊະນາການ ແລະ ດີຕໍ່ສຸຂະພາບ ດ້ວຍການເຊື່ອມສານເອົາຄວາມຮູ້ດ້ານໂພຊະນາການເຂົ້າໃນຫຼັກສູດການຮຽນການສອນ, ລວມທັງການເຮັດກິດຈະກຳກະສິກຳຂະໜາດນ້ອຍໃນໂຮງຮຽນ ແລະ ກິດຈະກຳອື່ນໆ. | - | - | 347,044,920 | - | - | 347,044,920 | 83,979 |
| 10 – ສະໜັບສະໜູນການສະໜອງຈຸນລະສານອາຫານເສີມ, ຢາຂ້າແມ່ທ້ອງ, ການສັກຢາປ້ອງກັນພະຍາດ ແລະ ວຽກງານສາທາລະນະສຸກດ້ານຕ່າງໆໃນໂຮງຮຽນ. | - | 33,672,720 | 631,277,865 | 410,261,715 | - | 1,075,212,300 | - |
| 11 – ສົ່ງເສີມການເຮັດສຸຂະອານາໄມ, ນ້ຳສະອາດ, ສຸຂາພິບານ ແລະ ການລ້າງມືໃນໂຮງຮຽນ | 8,062,586,343 | 8,368,964,624 | 8,368,964,624 | 8,368,964,624 | 8,368,964,624 | 41,538,444,838 | 773,544 |

| | | | | | | | |
|---|---|---|---|---|---|---|---|
| 12 – ສະໜອງ ແລະ ສົ່ງເສີມການສະໜອງອາຫານທ່ຽງໃນໂຮງຮຽນ | 5,739,615,019 | 6,095,983,536 | 6,236,799,088 | 6,381,591,050 | 6,532,109,336 | 30,986,098,030 | 14,509,695 |
| 13 – ສົ່ງເສີມການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM) ແລະ ການປິ່ນປົວອາການຂາດສານອາຫານໃນສະຖານທີ່ບໍລິການສາທາລະນະສຸກ. | - | - | 139,092,000 | - | - | 139,092,000 | 10,398,346 |
| 14 – ເສີມຂະຫຍາຍຄວາມສາມາດຂອງອົງການຈັດຕັ້ງ, ການຄຸ້ມຄອງ, ການວາງແຜນ, ການບໍລິຫານ ແລະ ການປະສານງານຫຼາຍຂະແໜງການຢູ່ທຸກໆຂັ້ນ. | - | - | 161,305,200 | - | - | 161,305,200 | 125,668 |
| 15 – ເສີມຂະຫຍາຍຄວາມສາມາດດ້ານຊັບພະຍາກອນມະນຸດໃນທຸກຂະແໜງການທຸກຂັ້ນ | - | 33,672,720 | 663,048,450 | - | - | 696,721,170 | 1,779,833 |
| 16 – ສົ່ງເສີມການເຊື່ອມສານວຽກງານໂພຊະນາການເຂົ້າໃນແຜນງານ ຮສຂ | 69,466,466,786 | 157,551,277,920 | 161,582,275,694 | 165,547,209,686 | 169,455,433,568 | 723,602,663,654 | 223,416,740 |
| 17 – ເພີ່ມທະວີການຄຸ້ມຄອງ ແລະ ນຳໃຊ້ກອບຜົນໄດ້ຮັບອັນດຽວກັນ ເພື່ອການຕິດຕາມປະເມີນຜົນ, ການລາຍງານປົກກະຕິ, ການເຝົ້າລະວັງ, ການຄົ້ນຄວ້າ, ການສຳຫຼວດ ແລະ ການແບ່ງປັນຂໍ້ມູນ, ແລະ ຖອດຖອນບົດຮຽນການປະຕິບັດທີ່ໄດ້ຜົນດີ. | 43,857,067,698 | 46,406,107,983 | 47,740,796,553 | 48,146,172,971 | 48,862,851,193 | 235,012,996,398 | 35,613 |
| 18 – ປັບປຸງການຄຸ້ມຄອງການເງິນ, ວາງແຜນ, ຕິດຕາມ ແລະ ລາຍງານການນຳໃຊ້ທຶນລັດ ແລະ ທຶນຊ່ວຍເຫຼືອເພື່ອການພັດທະນາໃນທຸກໆຂະແໜງການ ແລະ ທຸກໆຂັ້ນ. | 45,194,395,677 | 47,043,245,413 | 47,549,633,713 | 47,964,833,713 | 47,549,633,713 | 235,301,742,230 | 110,335 |
| 19 – ເພີ່ມທະວີການລົງທຶນຂອງລັດ ໃນວຽກງານໂພຊະນາການເພື່ອໃຫ້ມີຄວາມຍືນຍົງ | - | - | 1,468,251,000 | 1,053,051,000 | 1,066,233,600 | 3,587,535,600 | 4,262,539 |
| 20 – ພັດທະນາ ແລະ ຈັດຕັ້ງປະຕິບັດແຜນສຳຮອງເພື່ອເຫດສຸກເສີນຮ່ວມກັນຫຼາຍຂະແໜງການ ເພື່ອຕອບໂຕ້ກັບບັນຫາດ້ານໂພຊະນາການໃນຍາມສຸກເສີນໃຫ້ທັນເວລາ, ມີປະສິດຕິພາບ, ມີປະສິດທິຜົນ. | - | - | 1,596,412,860 | 1,579,576,500 | 1,579,576,500 | 4,755,565,860 | 14,273 |
| 21 – ພັດທະນາ ແລະ ປະຕິບັດແຜນງານຮ່ວມຫຼາຍຂະແໜງການ ເພື່ອຂະຫຍາຍວຽກງານການສື່ສານທາງສັງຄົມ ເພື່ອປ່ຽນແປງພຶດຕິກຳດ້ານໂພຊະນາການຢ່າງມີປະສິດທິຜົນ | - | - | 3,159,153,000 | 3,159,153,000 | 3,159,153,000 | 9,477,459,000 | |
| 22 – ພັດທະນາ ແລະ ປະຕິບັດແຜນງານຮ່ວມຫຼາຍຂະແໜງການ ເພື່ອສົ່ງເສີມຄວາມສະເໝີພາບຍິງຊາຍ ໃນວຽກງານໂພຊະນາການໃນທຸກໆຂະແໜງການ ແລະ ທຸກໆຂັ້ນ. | - | 217,222,260 | 200,385,900 | 200,385,900 | 200,385,900 | 818,379,960 | 71,495 |
| **ທັງໝົດ** | **654,021,777,001** | **771,334,894,261** | **797,155,405,226** | **807,253,651,409** | **814,019,167,508** | **3,843,784,885,290** | **394,436,622** |

# 4. ສະຫຼຸບລວມ

ຄ້າຍຄືກັນກັບບັນດາປະເທດທີ່ກຳລັງພັດທະນາ, ປະເທດລາວກຳລັງປະເຊີນກັບຂໍ້ຈຳກັດດ້ານການເງິນມະຫາພາກ ແລະ ການ ຂາດສານອາຫານທີ່ອາດຈະເພີ່ມຂຶ້ນ ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ແລະ ວິກິດການອື່ນໆໃນທົ່ວໂລກທີ່ສົ່ງຄວາມກົດດັນຕໍ່ລະບົບເສດຖະກິດ ແລະ ການສະໜອງອາຫານ. ປະເທດລາວມີແນວໂນ້ມທີ່ຈະສືບຕໍ່ອາໄສຄູ່ຮ່ວມພັດທະນາຕໍ່ໄປໃນການປັບປຸງຜົນໄດ້ຮັບດ້ານໂພຊະນາການ; ແນວໃດກໍ່ຕາມ, ຍ້ອນຄວາມບໍ່ແນ່ນອນຂອງການສະໜອງເງິນຈາກພາຍນອກ ແລະ ບັນຫາບໍ່ມີທຶນພຽງພໍຕໍ່ການປະຕິບັດວຽກງານໂພຊະນາການໃນຫຼາຍປີຜ່ານມາ, ລັດຖະບານຄວນໃຫ້ບຸລິມະສິດແກ່ການລະດົມທຶນພາຍໃນຕື່ມອີກ ເພື່ອໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນ NPAN 2021–2025. ເຊິ່ງມັນສາມາດເຮັດໄດ້ດ້ວຍການເພີ່ມລາຍຮັບຂອງລັດຖະບານໃຫ້ຫຼາຍຂຶ້ນ ແລະ/ຫຼື ການປັບປຸງການນຳໃຊ້ທຶນຢ່າງມີປະສິດທິພາບ ເພື່ອໃຫ້ສາມາດປະຫຍັດຄ່າໃຊ້ຈ່າຍທີ່ຊ່ວຍໃຫ້ມີທຶນເຫຼືອໄປໝູນໃຊ້ຄືນໃໝ່.

ຂໍແນະນຳໃຫ້ລັດຖະບານລາວນຳໃຊ້ເຄື່ອງມືຄິດໄລ່ຕົ້ນທຶນສຳລັບ NPAN ຢ່າງເປັນລະບົບ ແລະ ເຄື່ອງມືຕິດຕາມລາຍຈ່າຍດ້ານໂພຊະນາການຊຸດໃໝ່ທີ່ສະຫະພາບເອີຣົບພັດທະນາຂຶ້ນ ເພື່ອຊ່ວຍໃນການປັບປຸງການວາງແຜນນຳໃຊ້ຊັບພະຍາກອນໃນທຸກໆຂະແໜງການ ແລະ ທຸກໆຂັ້ນຂອງອົງການຈັດຕັ້ງລັດ. ແລະ ຂໍແນະນຳອີກວ່າ ການຄິດໄລ່ຕົ້ນທຶນສຳລັບແຜນ NPAN ໃນອານາຄົດຄວນປະຕິບັດໃນຕອນຕົ້ນຂອງຂະບວນການສ້າງແຜນຍຸດທະສາດ ແລະ ດຳເນີນໄປຄຽງຄູ່ກັບການສ້າງແຜນກິດຈະກຳ. ກິດຈະກຳທັງໝົດຄວນມີເປົ້າໝາຍທີ່ກຳນົດຢ່າງຈະແຈ້ງ (ຕົວຢ່າງ: ຈຳນວນເມືອງທີ່ຈະປະຕິບັດກິດຈະກຳ, ຈຳນວນຄົນທີ່ຈະໄດ້ຮັບການຝຶກອົບຮົມ, % ຂອງປະຊາກອນທີ່ໄດ້ໃຫ້ບໍລິການ ແລະ ອື່ນໆ), ພ້ອມທັງລາຍລະອຽດກ່ຽວກັບວິທີການຈັດຕັ້ງປະຕິບັດກິດຈະກຳ, ປະເພດ ແລະ ປະລິມານຂອງສິ່ງທີ່ຕ້ອງໃຊ້ໃນການດຳເນີນງານ. ສົມມຸດຕິຖານທີ່ໃຊ້ໃນການຄິດໄລ່ຕົ້ນທຶນອາດຖືກທົບທວນຄືນ, ໃນລະຫວ່າງການທົບທວນໄລຍະກາງ, ເພື່ອເບິ່ງຄວາມຖືກຕ້ອງ ແລະ ດັດປັບໄປຕາມແຜນການຈັດຕັ້ງປະຕິບັດຕົວຈິງ ແລະ ຄ່າໃຊ້ຈ່າຍສຳລັບສະພາບຕົວຈິງຂອງລາວ, ເຊິ່ງມັນຈະຊ່ວຍປັບປຸງຄວາມຖືກຕ້ອງຂອງຕົ້ນທຶນ ແລະ ເປັນປະໂຫຍດຕໍ່ການຄິດໄລ່ຕົ້ນທຶນໃນອານາຄົດ. ນອກຈາກນັ້ນ, ເຄື່ອງມືຄິດໄລ່ຜົນກະທົບຂອງພະຍາດລະບາດ, ລວມທັງເຄື່ອງມືທີ່ຊ່ວຍຮັກສາຊີວິດ (LiST) ຫຼື ເຄື່ອງມືຄິດໄລ່ຜົນຮັບສູງສຸດດ້ານໂພຊະນາການ[3], ຄວນຖືກນຳໃຊ້ເພື່ອການຕັດສິນໃຈໂດຍອີງໃສ່ຂໍ້ມູນເພື່ອຈັດສັນທຶນໃຫ້ກິດຈະກຳທີ່ເປັນບູລິມະສິດ ເນື່ອງຈາກວ່າແຕ່ລະກິດຈະກຳມີຄວາມຄຸ້ມຄ່າໃນການລົງທຶນບໍ່ເທົ່າກັນ.

